Get ADOBE® FLASH® PLAYER

- ໜ້າຫຼັກ
- ກ່ຽວກັບ ນະຄອນຫຼວງວຽງຈັນ
  - ສະມະຊິກອົງການປົກຄອງ ນະຄອນຫຼວງວຽງຈັນ
  - ປະຫວັດຄວາມເປັນມາ ນວ
  - ທີ່ຕັ້ງ, ພະລະບົດບາດ ສິດ ແລະ ໜ້າທີ
  - ເລຂາພັກ, ເຈົ້າຄອງນະຄອນຫຼວງວຽງຈັນ ແຕ່ລະໄລຍະ
  - ຄະນະບໍລິຫານງານພັກ ນະຄອນຫຼວງວຽງຈັນ ສະໄໝທີ VI
- ຂ່າວສານ
  - ຂ່າວ ການເຄື່ອນໄຫວ ຂອງການນຳ ນວ
  - ຂ່າວ ການເມືອງ - ການປົກຄອງ
  - ຂ່າວ ເສດຖະກິດ
  - ຂ່າວ ວັດທະນະທຳ ແລະ ສັງຄົມ
  - ຂ່າວ ພັດທະນາຕົວເມືອງ
  - ຂ່າວ ປ້ອງກັນຊາດ - ປ້ອງກັນຄວາມສະຫງົບ
  - ຂ່າວ ການພົວພັນຕ່າງປະເທດ
  - ຂ່າວ ອື່ນໆ
  - ວາລະສານ ນະຄອນຫຼວງວຽງຈັນ
- ນິຕິກຳ
  - ນິຕິກຳຂັ້ນສູນກາງ
    - ຄຳສັ່ງຂັ້ນສູນກາງ
    - ແຈ້ງການຂັ້ນສູນກາງ
    - ຂໍ້ຕົກລົງຂັ້ນສູນກາງ
    - ກົດໝາຍຂັ້ນສູນກາງ
    - ລັດຖະທຳມະນູນຂັ້ນສູນກາງ
    - ລັດຖະບັນຍັດຂັ້ນສູນກາງ
    - ດຳລັດຂັ້ນສູນກາງ
  - ນິຕິກຳຂັ້ນນະຄອນຫຼວງວຽງຈັນ
    - ຂໍ້ຕົກລົງ
      - ຂໍ້ຕົກລົງເຈົ້າຄອງນະຄອນຫຼວງວຽງຈັນ
      - ຂໍ້ຕົກລົງ ຫ້ອງວ່າການ ແລະ ພະແນກການ
    - ແຈ້ງການ
    - ຄຳສັ່ງ
    - ຄຳແນະນຳ
    - ມະຕິກອງປະຊຸມ
- ສະແດງຄວາມຄິດເຫັນ
- ກ່ຽວກັບເວັບໄຊ
  - ພາລະບົດບາດເວັບໄຊ
  - ຄະນະຮັບຜິດຊອບເວັບໄຊ
- ພາກສ່ວນທີ່ຂື້ນກັບ ນວ
  - ສະຖາບັນຄົ້ນຄວ້າພັດທະນາເສດຖະກິດ-ສັງຄົມ ນວ
    - ໂຄ່ງຮ່າງການຈັດຕັ້ງ
  - ເມືອງທີ່ຂື້ນກັບ ນວ
    - ເມືອງສີສັດຕະນາກ
    - ເມືອງຈັນທະບູລີ
  - ພະແນກການອ້ອມຂ້າງ ນວ
    - ພະແນກ ໂຍທາທິການ ແລະ ຂົນສົ່ງ

າດນຳພາຂອງຄະນະພັກ ເພີ່ມທະວີຄວາມສັກສິດຂອງການບໍລິຫານລັດ ເສີມຂະຫຍາຍປະຊາທິປະໄຕປະຊາຊົນ ເສີມສ້າງສັງຄົມສາມັກຄີປອງດອງ ປຸກລະດົມກຳລັງແຮງທ

## ຂ່າວເດັ່ນ

" ຮ່າງ " ຂໍ້ຕົກລົງ ວ່າດ້ວຍມາດຕະການຫຼຸດຜ່ອນອຸປະຕິເຫດ ແລະ ການຮັກສາຄວາມປອດໄພຕາມຖະໜົນ ທີ່ວນະຄອນຫຼວງວຽງຈັນ

# ກ່ຽວກັບເວັບໄຊ

## ການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ ທີ່ຈໍາໜ່າຍຢູ່ໃນນະຄອນຫຼວງວຽງຈັນ

Like 0 Tweet

ຂໍ້ຕົກລົງວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ ທີ່ຈໍາໜ່າຍຢູ່ໃນນະຄອນຫຼວງວຽງຈັນ ສະບັບເລກທີ 1317/ຈນວ, ລົງວັນທີ 21 ທັນວາ 2018

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ເລກທີ: 1317 /ຈນວ
ລົງວັນທີ: 21 ທັນວາ 2018

**ຂໍ້ຕົກລົງ**
**ວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ ທີ່ຈໍາໜ່າຍຢູ່ໃນນະຄອນຫຼວງວຽງຈັນ**

- ອີງຕາມ ມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ມາດຕາ 05 ໝວດທີ I ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08 ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ພາກທີ IV ຂອງກົດໝາຍວ່າດ້ວຍການປະມົງ ສະບັບເລກທີ 03/ສພຊ, ລົງວັນທີ 09 ກໍລະກົດ 2009 ວ່າດ້ວຍການນໍາໃຊ້ສັດນໍ້າ;
- ອີງຕາມ ມະຕິຕົກລົງຂອງກອງປະຊຸມສະໄໝສາມັນ ເທື່ອທີ 03 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ ຊຸດທີ I ຕັ້ງວັນທີ 27 ມິຖຸນາ - 01 ກໍລະກົດ 2017 ສະບັບເລກທີ 040/ສປນວ, ລົງວັນທີ 06 ພະຈິກ 2017.

**ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:**

**ໝວດທີ 1**
**ບົດບັນຍັດທົ່ວໄປ**

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ເປັນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ກົດໝາຍວ່າດ້ວຍການປະມົງ; ແນໃສ່ສົ່ງເສີມ, ຄຸ້ມຄອງຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນໍ້າ ທີ່ຜະລິດຢູ່ພາຍໃນ, ນໍາເຂົ້າຈາກຕ່າງແຂວງ ຫຼື ຕ່າງປະເທດ ທີ່ເອົາມາຈໍາໜ່າຍ ຢູ່ນະຄອນຫຼວງວຽງຈັນ ໃຫ້ມີຄຸນນະພາບຖືກຕ້ອງຕາມຫຼັກການສຸຂານາໄມ ຮັບປະກັນໃຫ້ຜູ້ບໍລິໂພກໄດ້ຊົມໃຊ້ສິນຄ້າທີ່ມີຄວາມປອດໄພ ແລະ ໄດ້ບໍລິໂພກອາຫານສະອາດ ທັງເປັນການແຂ່ງຂັນກັບສິນຄ້າຕ່າງປະເທດໄດ້.

**ມາດຕາ 2 ນິຍາມ**

2.1. ການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບສັດ ແລະ ຜະລິດຕະພັນສັດ ທີ່ຈໍາໜ່າຍຢູ່ນະຄອນຫຼວງວຽງຈັນ ເປັນການກະຕຸກຊຸກຍູ້ຜູ້ປະກອບການ ໃຫ້ຕັ້ງໜ້າແຂ່ງຂັນ ຂະຫຍາຍການຜະລິດ ແລະ ຈໍາໜ່າຍສິນຄ້າໃຫ້ໄປສູ່ມາດຕະຖານແຫ່ງຊາດ ແລະ ສາກົນ (ISO) ເລີ່ມແຕ່ຫົວທີ ທັງເປັນການຮັບປະກັນຫຼັກສຸຂານາໄມໃຫ້ຜູ້ບໍລິໂພກ;

1

2.2. ການຄຸ້ມຄອງຄຸນນະພາບສັດ ແມ່ນການຄວບຄຸມຄຸນນະພາບສັດເລີ່ມຕັ້ງແຕ່ການກຽມປ່ອນລ້ຽງ, ຂະຫຍາຍພັນ, ໃຫ້ອາຫານສັດ, ການປົວລະບັດຮັກສາສຸຂະພາບສັດ, ການຂາຍ, ການຂ້າຄິວ ຈົນຮອດຂະບວນການປຸງແຕ່ງ ແລະ ຈຳໜ່າຍຢູ່ທ້ອງຕະຫຼາດ ໃຫ້ຖືກຕ້ອງຕາມຫຼັກໂພຊະນາການ, ຄວາມສະອາດ ແລະ ປອດໄພຕໍ່ຜູ້ບໍລິໂພກ.

**ມາດຕາ 3 ອະທິບາຍຄຳສັບ**

1. **ຜະລິດຕະພັນສັດ** ໝາຍເຖິງຜົນຜະລິດ ທີ່ໄດ້ມາຈາກທຸກພາກສ່ວນຂອງສັດ ເຊັ່ນ: ຊາກສັດໝົດໂຕ, ຊາກສັດເຄິ່ງໂຕ, ຊີ້ນ, ໄຂ່, ໜັງ, ເຂົາ, ກະດູກ, ເລືອດ, ເຄື່ອງໃນ, ໄຂມັນ, ຂົນ, ເລັບ, ນ້ຳເຊື້ອ, ຕົວອ່ອນໃນທ້ອງ, ຈຸລັງໄຂ່, ຊິ້ນສ່ວນອື່ນໆ ທີ່ໄດ້ຈາກທຳມະຊາດ ແລະ ໄດ້ຈາກການລ້ຽງ ຫຼື ຜ່ານການປຸງແຕ່ງ;

2. **ເຈົ້າໜ້າທີ່ສັດຕະວະແພດ, ເຈົ້າໜ້າທີ່ປະມົງ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງ** ໝາຍເຖິງອົງການຈັດຕັ້ງ ທີ່ສ້າງຕັ້ງໂດຍການອະນຸມັດຈາກພາກລັດ ເພື່ອເຮັດໜ້າທີ່ກວດກາການປະຕິບັດໜ້າທີ່ ຂອງໜ່ວຍກວດກາ, ຜູ້ປະກອບການ ແລະ ໃຫ້ຄວາມຮູ້ດ້ານກົດໝາຍປະເພດສິນຄ້າ;

3. **ດ່ານກວດກາສັດຕະວະແພດ** ໝາຍເຖິງສະຖານທີ່ທາງການ ເປັນປ່ອນກວດກາມາດຕະຖານຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ ທັງຜະລິດຢູ່ພາຍໃນ ແລະ ນຳເຂົ້າຈຳໜ່າຍ;

4. **ຢາຕົກຄ້າງໃນສັດ ແລະ ສັດນ້ຳ** ໝາຍເຖິງຢາ ທີ່ໃຊ້ເຂົ້າໃນການຮັກສາສຸຂະພາບສັດ, ປິ່ນປົວສັດເຈັບ ທີ່ມີຢູ່ໃນຮ່າງກາຍຂອງສັດ ໃນປະລິມານສູງເກີນມາດຕະຖານກຳນົດໄວ້ ເຊັ່ນ: ກຸ່ມຢາເປນີຊີລີນ, ກຸ່ມຢາເຕຕາຊີລີນ, ກຸ່ມຢາເຕຕາຊີກະລີນ, ກຸ່ມຢາຊັນໂຟນາໄມ...;

5. **ສານເຄມີປົນເປື້ອນ** ໝາຍເຖິງການນຳໃຊ້ສານເຄມີ ໃນການຍືດອາຍຸການເກັບຮັກສາ, ການແປຮູບຜະລິດຕະພັນສັດ ແລະ ອາຫານທະເລ ເຊັ່ນ: ຟອກມາລີນ, ໄຊດາໄຟ, ສານຟອກຂາວ...;

6. **ຄວາມປອດໄພການບໍລິໂພກ** ໝາຍເຖິງຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ ທີ່ມີຄຸນນະພາບດີ ນຳມາຈຳໜ່າຍໃຫ້ ບໍ່ມີຢາຕົກຄ້າງ ຫຼື ຕົກຄ້າງໃນລະດັບຕ່ຳ, ບໍ່ມີສານເຄມີປົນເປື້ອນ, ບໍ່ມີພະຍາດຕິດແປດ ສາມາດນຳມາບໍລິໂພກໄດ້ ໂດຍບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມ;

7. **ຄຸນນະພາບສັດ** ໝາຍເຖິງຜົນຜະລິດ ທີ່ໄດ້ຈາກການລ້ຽງ, ການດູແລຮັກສາທີ່ຖືກຕ້ອງຕາມຫຼັກວິຊາການ, ຫຼັກການສຸຂານາໄມ ແລະ ປອດໄພຕໍ່ຜູ້ບໍລິໂພກ;

8. **ການວິໄຈຄຸນນະພາບຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ** ໝາຍເຖິງການນຳເອົາຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ມາກວດສອບເພື່ອເບິ່ງລະດັບຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ໃນຜະລິດຕະພັນດັ່ງກ່າວ;

9. **ຫຼັກການສຸຂານາໄມ** ໝາຍເຖິງມາດຕະການດ້ານວິຊາການ ໃຫ້ມີຄວາມສະອາດ ແລະ ປອດໄພດີໃນຂະບວນການລ້ຽງ, ການຂ້າ, ການຄິວ, ການແປຮູບ, ການຫຸ້ມຫໍ່, ການເກັບຮັກສາ, ການຂົນສົ່ງ, ການຈຳໜ່າຍ ລວມທັງການບໍລິໂພກຊີ້ນສັດ ແລະ ຜະລິດຕະພັນສັດ ເພື່ອປ້ອງກັນສຸຂະພາບຂອງຄົນ, ສັດ ແລະ ບໍ່ໃຫ້ສົ່ງຜົນກະທົບຕໍ່ສະພາບແວດລ້ອມ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນ້ຳ**

1. ລັດປຸກລະດົມ ແລະ ສົ່ງເສີມຊາວກະສິກອນ, ນັກທຸລະກິດ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ດຳເນີນການລ້ຽງ, ການຈັບຫາ, ປຸງແຕ່ງ ແລະ ເກັບຮັກສາຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ, ແນະນຳການບໍລິໂພກຖືກຕາມຫຼັກການສຸຂານາໄມ, ບັນລຸມາດຕະຖານແຫ່ງຊາດ ແລະ ມາດຕະຖານສາກົນ;

2. ຊຸກຍູ້ສົ່ງເສີມການລ້ຽງສັດຂອງຊາວກະສິກອນ, ຜູ້ປະກອບການ ແລະ ນັກທຸລະກິດໃຫ້ມີການຜະລິດລວມໝູ່ ເປັນຟາມຂະໜາດນ້ອຍ ແລະ ຂະໜາດປານກາງ (SMEs), ເມືອງໜຶ່ງ ຢ່າງໜ້ອຍຜະລິດຕະພັນໜຶ່ງ ແລະ ມີລະບົບການປຸງແຕ່ງ, ການເກັບຮັກສາ ແລະ ການຈໍາໜ່າຍທີ່ສີວິໄລ;

3. ສົ່ງເສີມຊາວນະຄອນຫຼວງວຽງຈັນ ຜະລິດອາຫານວຽງຈັນ, ອາຫານລາວດ້ວຍຍີ່ຫໍ້ຍືນຍົງ, ທັງມີມາດຖານດີ ສາມາດແຂ່ງຂັນກັບສິນຄ້າປະເພດດຽວ ກັບປະເທດອ້ອມຂ້າງ, ສົ່ງເສີມຢ່າງຕັ້ງໜ້າ ການບໍລິໂພກຊີ້ນ, ປາ ແລະ ຜະລິດຕະພັນຈາກສັດ... ທີ່ສະອາດຖືກຫຼັກສຸຂານາໄມ;

4. ຊຸກຍູ້ສົ່ງເສີມຊາວກະສິກອນ, ຜູ້ປະກອບການພາຍໃນນະຄອນຫຼວງວຽງຈັນ ແລະ ນັກລົງທຶນຕ່າງປະເທດ ນໍາໃຊ້ອຸປະກອນ, ເຄື່ອງມື ແລະ ເຕັກນິກໃໝ່ ເຂົ້າໃນການລ້ຽງ ແລະ ການປຸງແຕ່ງຜະລິດຕະພັນສັດ ແລະ ສັດນ້ຳ.

**ມາດຕາ 5 ຫຼັກການຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ**

ການຄຸ້ມຄອງຄຸນນະພາບສິນຄ້າກ່ຽວກັບສັດ ແລະ ສັດນ້ຳ ຢູ່ທ້ອງຕະຫຼາດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຄຸ້ມຄອງມາດຕະຖານ ແລະ ເງື່ອນໄຂຂອງການລ້ຽງ, ການແປຮູບຜະລິດຕະພັນ ແລະ ການເກັບຮັກສາ ໃຫ້ຖືກເຕັກນິກວິຊາການ;

2. ຄຸ້ມຄອງສະຖານທີ່ແປຮູບ, ຈໍາໜ່າຍສັດ ແລະ ຜະລິດຕະພັນສັດ ແລະ ສັດນ້ຳ ຫຼື ຕະຫຼາດຈໍາໜ່າຍ ຕາມມາດຕະຖານຕະຫຼາດຈໍາໜ່າຍ ປະເພດຕ່າງໆ;

3. ກຸ່ມການຜະລິດ ແລະ ຜູ້ປະກອບການ ມີສ່ວນຮ່ວມ ໃນການຄຸ້ມຄອງຄຸນນະພາບສິນຄ້າກ່ຽວກັບສັດ ແລະ ສັດນ້ຳ ເພື່ອຈໍາໜ່າຍໃນທ້ອງຕະຫຼາດ ແລະ ຫ້າງຮ້ານ, ທັງແຂ່ງຂັນຮັບປະກັນມາດຕະຖານ, ຄຸນນະພາບ ແລະ ທັງຕໍານິຕິຕຽນຄູ່ຮ່ວມທີ່ລະເມີດມາດຕະຖານ ແລະ ຄຸນນະພາບແບບປົກກະຕິ ຕໍ່ເນື່ອງ, ປະຕິບັດລະບອບກວດກາຄຸນນະພາບ, ມາດຕະຖານ, ຄວາມປອດໄພ ແລະ ສຸຂານາໄມ ຂອງສິນຄ້າ;

4. ຜູ້ຜະລິດ, ປຸງແຕ່ງ ແລະ ຈໍາໜ່າຍ ຮັບຜິດຊອບຕໍ່ກົດໝາຍ ແລະ ຄວາມບໍ່ປອດໄພ ຕໍ່ຜູ້ບໍລິໂພກຜະລິດຕະພັນຂອງຕົນ, ຕ້ອງຮັບປະກັນຜົນປະໂຫຍດສູງສຸດ ຂອງຜູ້ຜະລິດ, ຜູ້ລົງທຶນ ແລະ ຜູ້ບໍລິໂພກ;

5. ຄຸນນະພາບສິນຄ້າກ່ຽວກັບສັດ ແລະ ສັດນ້ຳ, ຄວາມປອດໄພຂອງຜູ້ບໍລິໂພກ ຍັງຍືນໂດຍກົງຈາກເຈົ້າໜ້າທີ່ສັດຕະວະແພດ, ເຈົ້າໜ້າທີ່ປະມົງ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ແລະ ທາງອ້ອມ ຈາກສື່ມວນຊົນ ແລະ ລູກຄ້າຜູ້ຊົມໃຊ້.

**ມາດຕາ 6 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ໃນພື້ນທີ່ນະຄອນຫຼວງວຽງຈັນ ຕໍ່ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການລ້ຽງ, ການແປຮູບ, ການປຸງແຕ່ງ, ການເກັບຮັກສາ ແລະ ການຈໍາໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳ (ຜູ້ປະກອບການທຸລະກິດ) ຢູ່ນະຄອນຫຼວງວຽງຈັນ.

## ໝວດທີ 2
## ມາດຕະຖານຄຸນນະພາບສັດ, ຜະລິດຕະພັນສັດ, ສັດນ້ຳ ແລະ ອົງການກວດການມາດຕະຖານ

**ມາດຕາ 7 ການກຳນົດມາດຕະຖານຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນ້ຳ**

**7.1. ການກຳນົດມາດຕະຖານຄຸນນະພາບສັດ:**

7.1.1. ຟາມລ້ຽງສັດຕ້ອງຂຶ້ນທະບຽນ ໃຫ້ຖືກຕ້ອງຕາມລະບຽບ ແລະ ຖືກຢັ້ງຢືນຈາກທາງການ, ຈາກ ອົງການຄຸ້ມຄອງການລ້ຽງສັດ ແລະ ການປະມົງ ຫຼືຂະແໜງກະສິກຳ ແລະ ປ່າໄມ້ ຂັ້ນຕ່າງໆ, ຖືກຕ້ອງຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍກິດຈະການຟາມລ້ຽງສັດໃນ ສປປ ລາວ ສະບັບເລກທີ 0209/ກປ, ລົງວັນທີ 06 ກຸມພາ 2013.

7.1.2. ຂະບວນການຜະລິດ ຕ້ອງປະຕິບັດຖືກຕ້ອງ, ສອດຄ່ອງ ແລະ ເປັນລະບົບຕ່ອງໂສ້ ຕາມພາກທີ V ໝວດທີ 2, ມາດຕາ 74, 75, 76, 77 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016.

7.1.3. ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງມີມາດຕະຖານ, ຖືກກັບເຕັກນິກດ້ານສຸຂານາໄມ ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕາມຂໍ້ຕົກລົງ ສະບັບເລກທີ 0386/ກລປ, ລົງວັນທີ 14 ມີນາ 2012.

7.1.4. ສັດ ແລະ ສັດນ້ຳ ທີ່ຈະນຳເຂົ້າມາຈຳໜ່າຍຢູ່ທ້ອງຕະຫຼາດ ຈະຕ້ອງໄດ້ຜ່ານການກວດກາ, ຢັ້ງຢືນ ຄຸນນະພາບສັດ ຈາກອົງການຄຸ້ມຄອງດ້ານການລ້ຽງສັດ ແລະ ການປະມົງຂອງລັດ, ຫ້ອງວິໄຈປະຈຳຕະຫຼາດ, ປະຈຳເມືອງ ຫຼື ອົງກອນທີ່ມີສິດອຳນາດກວດກາສັດຂອງລັດ ຫຼື ເອກະຊົນປະຈຳຈຸດໃກ້ຄຽງ, ມີປະລິມານຢາຕ້ານເຊື້ອຕົກຄ້າງໃນສັດ ແລະ ສັດນ້ຳ ບໍ່ເກີນຄ່າມາດຕະຖານ ຂອງອົງການສຸຂະພາບສັດສາກົນ (OIE ປີ 1998).

7.1.5. ສັດທີ່ນຳເຂົ້າຈາກຕ່າງແຂວງ ແລະ ຕ່າງປະເທດ ທີ່ຈະນຳມາຈຳໜ່າຍ ຢູ່ໃນນະຄອນຫຼວງວຽງຈັນ ຖືກກວດກາ ແລະ ຢັ້ງຢືນຕິດສະຫຼາກ ຈາກອົງການມາດຕະຖານ (ໜ່ວຍກວດກາ) ປະຈຳສູນ ຫຼື ດ່ານສາກົນ ແລະ ທ້ອງຖິ່ນ, ພ້ອມທັງໄດ້ຜ່ານການກວດກາ ສານຢາຕ້ານເຊື້ອຕົກຄ້າງ, ອາຍຸການນຳໃຊ້ ແລະ ໄດ້ຮັບອະນຸຍາດຈາກໜ່ວຍງານກ່ຽວຂ້ອງ ຈຶ່ງສາມາດນຳມາຈຳໜ່າຍໄດ້ (ແຕ່ການກວດກາ-ຢັ້ງຢືນ ຕ້ອງເປັນໄປຕາມລະບຽບການ ທີ່ລັດຖະບານກຳນົດ).

**7.2. ການກຳນົດມາດຕະຖານຄຸນນະພາບຜະລິດຕະພັນສັດ:**

7.2.1. ຜະລິດຕະພັນສັດ ທີ່ຈະຈຳໜ່າຍໃນທ້ອງຕະຫຼາດ ຕ້ອງໄດ້ຕິດສະຫຼາກ ຢັ້ງຢືນຄຸນນະພາບຈາກພາກສ່ວນກ່ຽວຂ້ອງ ແລະ ໃຫ້ຖືກຫຼັກການສຸຂານາໄມ, ໂດຍໃຫ້ປະຕິບັດຕາມແຈ້ງການຂອງກົມລ້ຽງສັດ ແລະ ການປະມົງ ກ່ຽວກັບການຈັດຕັ້ງປະຕິບັດ ມາດຕະການທາງດ້ານສຸຂານາໄມ ການວາງຂາຍຊີ້ນ ຢູ່ຕາມທ້ອງຕະຫຼາດສົດ ສະບັບເລກທີ 1410/ກລປ, ລົງວັນທີ 09 ສິງຫາ 2013, ບໍ່ມີສານເຄມີປົນເປື້ອນປະເພດ: ຢາດອງສົບ, ສານກອບ, ສານເລັ້ງຊີ້ນແດງ, ສານຟອກຂາວ.

7.2.2. ສະຖານທີ່ຈຳໜ່າຍ, ຫຸ້ມຫໍ່, ລວມເຖິງພາຊະນະບັນຈຸຜະລິດຕະພັນສັດ ຈະຕ້ອງປ້ອງກັນການກະທົບແຊກຊຶມເຊື້ອພະຍາດ ແລະ ຮັບປະກັນມາດຕະຖານຄວາມສະອາດ ແລະ ຄວາມປອດໄພ ໃຫ້ການບໍລິໂພກ.

7.2.3. ຂະບວນການນຳໃຊ້ວັດຖຸດິບໃນການຜະລິດ, ອຸປະກອນ, ເຕັກນິກການປຸງແຕ່ງ ຈະຕ້ອງເລີ່ມແຕ່ຫົວທີ ຮັບປະກັນໃຫ້ມີຄວາມປອດໄພຕໍ່ການບໍລິໂພກ.

7.2.4. ຜະລິດຕະພັນສັດ ທີ່ນຳເຂົ້າຈາກຕ່າງປະເທດ ເພື່ອນຳມາຈຳໜ່າຍໃນນະຄອນຫຼວງວຽງຈັນ ຕ້ອງຜ່ານດ່ານທີ່ທາງການອະນຸຍາດ ແລະ ໄດ້ຮັບອະນຸຍາດ ຈາກດ່ານກວດກາສັດຕະວະແພດສາກົນ ປະຈຳດ່ານສາກົນ ຫຼື ດ່ານທ້ອງຖິ່ນ ຈຶ່ງສາມາດນຳເຂົ້າມາຈຳໜ່າຍໄດ້.

**ມາດຕາ 8 ການສົ່ງເສີມຜູ້ຜະລິດ, ລ້ຽງສັດຖືກຫຼັກສຸຂານາໄມ**

1. ສົ່ງເສີມບຸກຄົນ, ນິຕິບຸກຄົນທີ່ຜະລິດ, ລ້ຽງສັດເປັນສິນຄ້າ ຈະເປັນແບບຄອບຄົວ, ລວມໝູ່ ຫຼື ແບບເປັນຟາມກໍຕ້ອງຄຳນຶງເຖິງຄຸນນະພາບ ແລະ ຄວາມສະອາດ ບັນລຸມາດຕະຖານ;

2. ສົ່ງເສີມໃຫ້ຜູ້ຜະລິດ, ລ້ຽງສັດເປັນສິນຄ້າໃຫ້ຫຼຸດຜ່ອນ ຫຼື ກ້າວໄປເຖິງບໍ່ນຳໃຊ້ຢາກະຕຸ້ນ ແລະ ສານເຄມີເຂົ້າໃນລະບົບການລ້ຽງສັດ, ການແປຮູບ ແລະ ການເກັບຮັກສາ;

3. ສົ່ງເສີມໃຫ້ຜູ້ລ້ຽງ ຫັນມານຳໃຊ້ປັດໃຈການລ້ຽງ, ການຜະລິດຈາກທຳມະຊາດ ທົດແທນການໃຊ້ຢາ, ໃຊ້ສານເຄມີ;

4. ສົ່ງເສີມໃຫ້ຜູ້ລ້ຽງປະຕິບັດຫຼັກການລ້ຽງສັດ ທີ່ຖືກຕ້ອງຕາມຫຼັກວິຊາການ ແລະ ສອດຄ່ອງຕາມມາດຕະຖານ, ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ກຳນົດໄວ້;

5. ການນຳເຂົ້າສັດ ແລະ ຜະລິດຕະພັນສັດ ຈາກຕ່າງແຂວງ ແລະ ຕ່າງປະເທດ ເພື່ອມາຈຳໜ່າຍ ຢູ່ນະຄອນຫຼວງວຽງຈັນ ຕ້ອງມີໃບຮັບຮອງ ແລະ ຢັ້ງຢືນຄຸນນະພາບສັດ ຈາກຕົ້ນທາງ ແລະ ຜ່ານການກວດສອບ, ຢັ້ງຢືນຈາກດ່ານກວດກາສັດຕະວະແພດສາກົນ ປະຈຳດ່ານ.

**ມາດຕາ 9 ການປົກປ້ອງຜູ້ຜະລິດຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ**

ອົງການປົກຄອງນະຄອນຫຼວງວຽງຈັນ ມີນະໂຍບາຍປົກປ້ອງຕໍ່ຜູ້ຜະລິດ, ຜູ້ຫຸ້ມຫໍ່, ຜູ້ຈຳໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳທີ່ສະອາດ ໂດຍພາກລັດຈະສະໜັບສະໜູນ: ການຝຶກອົບຮົມທາງດ້ານວິຊາການ, ນະໂຍບາຍສິນເຊື່ອຈາກທະນາຄານ, ກອງທຶນ, ການຕະຫຼາດ ພາຍໃນ ແລະ ສາກົນ, ການຕໍ່ລອງ, ການແຂ່ງຂັນດ້ານລາຄາ, ການໄດ້ຮັບນະໂຍບາຍ ໃນກໍລະນີເກີດໄພພິບັດຈາກທຳມະຊາດ ແລະ ໄດ້ຮັບການບໍລິການດ້ານສາທາລະນະ ສຸກ.

**ມາດຕາ 10 ການປົກປ້ອງຜູ້ບໍລິໂພກ**

1. ສົ່ງເສີມຜູ້ບໍລິໂພກ ມີສິດເລືອກໃຊ້ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ທີ່ຈຳໜ່າຍຢູ່ໃນຕະຫຼາດ ທີ່ມີສະຫຼາກຮັບຮອງມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;

2. ຜູ້ບໍລິໂພກສາມາດຊົມໃຊ້ສິນຄ້າ ທີ່ລະບຸສະຖານທີ່ຜະລິດ ແລະ ຈຳໜ່າຍທີ່ມີຄວາມສະດວກ ແລະ ສະອາດກວ່າ;

3. ຜູ້ບໍລິໂພກ ຕ້ອງສາມາດຮູ້ແຫຼ່ງວັດຖຸດິບທີ່ນຳມາປຸງແຕ່ງ, ສະຖານທີ່ຜະລິດ, ຈຳໜ່າຍ ທີ່ສະອາດ, ລາຄາເໝາະສົມກັບສະຖານະພາບ ສະຖານທີ່ ແລະ ແຫຼ່ງວັດຖຸດິບ ແລະ ສາມາດກວດສອບແຫຼ່ງທີ່ມາຄືນໄດ້;

4. ຜູ້ບໍລິໂພກລາຍໃຫຍ່ ສາມາດສັ່ງຈອງຜະລິດຕະພັນຕາມມາດຕະຖານ ທີ່ທາງການປະກາດໂດຍກົງ ນຳ ຜູ້ຜະລິດ ແລະ ວາງເງິນມັດຈຳ ເພື່ອຄວບຄຸມຄຸນນະພາບ;

5. ໃນກໍລະນີການບໍລິໂພກ ບໍ່ຮັບປະກັນຄວາມປອດໄພ, ບໍ່ຮັບປະກັນມາດຕະຖານຄຸນນະພາບ ຫຼື ປອມແປງ ຜູ້ບໍລິໂພກມີສິດຮ້ອງຟ້ອງຕໍ່ເຈົ້າຂອງສິນຄ້າຕາມກົດໝາຍ.

**ມາດຕາ 11 ການສົ່ງເສີມການຈຳໜ່າຍ**

1. ຜູ້ປະກອບການ ຕ້ອງຈຳໜ່າຍສິນຄ້າກ່ຽວກັບສັດ ແລະ ສັດນ້ຳ ທີ່ມີມາດຕະຖານຮອງຮັບ, ຖືກຫຼັກສຸຂານາໄມ ແລະ ໄດ້ຮັບອະນຸຍາດຈາກອົງການລັດ ຢ່າງຖືກຕ້ອງ;

2. ຜູ້ຈຳໜ່າຍສັດ ແລະ ຜະລິດຕະພັນສັດ ໃຫ້ຈຳໜ່າຍຢູ່ໃນສະຖານທີ່ ທີ່ທາງການອະນຸຍາດໃຫ້ ເພື່ອຫຼີກລ່ຽງການສູນເສຍຄຸນນະພາບ, ຂາດຫຼັກສຸຂານາໄມ ແລະ ຜິດລະບຽບການບໍລິການ;

3. ຜູ້ຈຳໜ່າຍສັດ ແລະ ຜະລິດຕະພັນສັດ ຕ້ອງຈັດວາງ ແລະ ສ້າງລະບົບປະເມດຜະລິດຕະພັນສັດ ເພື່ອສະດວກໃນການຄວບຄຸມມາດຕະຖານ;

4. ໃຫ້ພາກສ່ວນເອກະຊົນ, ນັກທຸລະກິດ ແລະ ນິຕິບຸກຄົນ ເປີດຮ້ານຈຳໜ່າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ມີລະບົບການນຳໃຊ້ເຄື່ອງເຢັນ ທີ່ມີຄວາມທັນສະໄໝ ພ້ອມທັງຕິດສະຫຼາກ ຢັ້ງຢືນຄຸນນະພາບຈາກອົງການທີ່ກ່ຽວຂ້ອງ;

5. ທຸກພາກສ່ວນເສດຖະກິດ, ບຸກຄົນ ແລະ ນິຕິບຸກຄົນ ລົງທຶນສ້າງຕະຫຼາດຂາຍຍົກ, ຂາຍຍ່ອຍ ໃຫ້ມີຈຸດລວບລວມຜົນຜະລິດ ໃນລະບົບສາງເຢັນ ທີ່ບັນລຸມາດຕະຖານກຳນົດໄວ້.

**ມາດຕາ 12 ການສົ່ງເສີມການຈຳໜ່າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ເພື່ອສົ່ງອອກສູ່ຕະຫຼາດສາກົນ**

ອົງການປົກຄອງນະຄອນຫຼວງວຽງຈັນ ມີນະໂຍບາຍສົ່ງເສີມນັກທຸລະກິດ, ຜູ້ປະກອບການ ແລະ ຊາວກະສິກອນ ແຂ່ງຂັນການຜະລິດສັດ ແລະ ຜະລິດຕະພັນສັດທີ່ມີຍີ່ຫໍ້, ຄົບມາດຕະຖານສາກົນ ຕາມນະໂຍບາຍ ຂອງລັດຖະບານ ເພື່ອສົ່ງອອກສູ່ຕະຫຼາດ ເປັນຕົ້ນ: ຊີ້ນງົວວຽງຈັນ, ປານ້ຳຂອງ, ປານ້ຳງື່ມ... ມີມາດຕະຖານ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດຕ່າງປະເທດນັ້ນໆ.

**ມາດຕາ 13 ການຢັ້ງຢືນ, ກວດກາຄຸນນະພາບສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ**

1. ສັດລ້ຽງ ທີ່ຈຳໜ່າຍອອກຈາກຟາມ ເຂົ້າໂຮງຂ້າສັດ ຫຼື ຈຸດຂ້າສັດຍ່ອຍ ແລະ ສັດນ້ຳ ທີ່ຈະຈຳໜ່າຍອອກຈາກຟາມ ຕ້ອງມີການຢັ້ງຢືນຜົນວິໄຈຢາຕ້ານເຊື້ອຕົກຄ້າງໃນສັດ ຈາກຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງວຽງຈັນ ປະກອບໃສ່ໃບອະນຸຍາດເຄື່ອນຍ້າຍສັດ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;

2. ຊີ້ນ ແລະ ຜະລິດຕະພັນຈາກສັດ ກ່ອນຈະນໍາອອກຈາກໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ ຫຼື ສະຖານທີ່ຂ້າສັດ ຈະຕ້ອງໄດ້ຮັບການຢັ້ງຢືນຈາກສັດຕະວະແພດ ປະຈໍາໂຮງຂ້າສັດ;

3. ໂຮງງານຜະລິດ, ປຸງແຕ່ງຜະລິດຕະພັນສັດ ຫຼື ບ່ອນແປຮູບຜະລິດຕະພັນສັດ ຕ້ອງໄດ້ຮັບການຮັບຮອງຜົນກວດກາ ຈາກສັດຕະວະແພດ ໂດຍຢັ້ງຢືນຈາກຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ ຫຼື ນະຄອນຫຼວງວຽງຈັນ;

4. ຊີ້ນສ່ວນສັດ, ຜະລິດຕະພັນສັດ ແລະ ອາຫານທະເລ ທີ່ຈໍາໜ່າຍໃນທ້ອງຕະຫຼາດ ຕ້ອງໄດ້ຮັບການຮັບຮອງຈາກຫ້ອງການກະສິກໍາ ແລະ ປ່າໄມ້ ປະຈໍາເມືອງ.

**ມາດຕາ 14 ຈຸດກວດກາຄຸນນະພາບສັດ ຫຼື ວິໄຈສານເຄມີຕົກຄ້າງ ຢູ່ນະຄອນຫຼວງວຽງຈັນ**

ຈຸດກວດກາຄຸນນະພາບສັດ ຫຼື ວິໄຈສານເຄມີຕົກຄ້າງ ທີ່ຈັດຕັ້ງປະຕິບັດ ຢູ່ນະຄອນຫຼວງວຽງຈັນ ມີ 03 ຈຸດ ຄື:

1. ສູນວິໄຈພະຍາດສັດ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກໍາ ແລະ ປ່າໄມ້;

2. ຫ້ອງວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນໃນສັດ ແລະ ຜະລິດຕະພັນສັດ ຢູ່ສູນວິໄຈພືດ ແລະ ສັດ (ໃນນາຫວາຍ), ພະແນກກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;

3. ຫ້ອງວິໄຈສານເຄມີປົນເປື້ອນໃນສັດ ແລະ ຜະລິດຕະພັນສັດ ປະຈໍາຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ແລະ ຕະຫຼາດອ້ອມຂ້າງ ຂອງ 09 ຕົວເມືອງ ຂອງນະຄອນຫຼວງວຽງຈັນ;

4. ນອກຈາກວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ໃນສູນກວດກາສັດແລ້ວ ຍັງສາມາດກວດກາວິໄຈຢາຕົກຄ້າງ ແລະ ສານເຄມີປົນເປື້ອນ ໃນຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນໍ້າ ຢູ່ພາກສະໜາມ ຈາກໜ່ວຍງານວິຊາການ ເຊັ່ນ: ຟາມລ້ຽງສັດ , ສະຖານທີ່ປຸງແຕ່ງ ແລະ ຫຸ້ມຫໍ່.

**ມາດຕາ 15 ສິດ ແລະ ໜ້າທີ່ ຂອງໜ່ວຍງານວິຊາການກວດກາ ກ່ອນການຈໍາໜ່າຍ**

1. ລົງສຸ່ມຕົວຢ່າງຢູ່ສະຖານທີ່ຜະລິດ, ປຸງແຕ່ງ ແລະ ບ່ອນຈໍາໜ່າຍ ເປັນປົກກະຕິ ເພື່ອກວດກາຄຸນນະພາບ ໃຫ້ສິນຄ້າໄດ້ມາດຕະຖານ;

2. ດໍາເນີນການກວດກາຄຸນນະພາບ ແລະ ວິໄຈຢາຕ້ານເຊື້ອຕົກຄ້າງໃນສັດໃນຟາມ ກ່ອນນໍາໄປຈໍາໜ່າຍທຸກໆຄັ້ງ;

3. ແຈ້ງຜົນການກວດກາຄຸນນະພາບສັດ, ຜົນການວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ແລະ ຂໍ້ແນະນໍາທາງດ້ານວິຊາການຢ່າງຊັດເຈນ ແລະ ຖືກຕ້ອງຕາມຫຼັກວິຊາການ ໃຫ້ເຈົ້າຂອງສິນຄ້າຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນໍ້າ;

4. ອໍານວຍຄວາມສະດວກໃຫ້ຊາວກະສິກອນ ຜູ້ປະກອບການດ້ານການຜະລິດ ຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນໍ້າ ທີ່ຜ່ານການກວດກາ ເຫັນວ່າມີຄວາມປອດໄພແລ້ວ ເຂົ້າຈໍາໜ່າຍໃນທ້ອງຕະຫຼາດ;

5. ສະກັດກັ້ນຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ ທີ່ເຫັນວ່າມີຄວາມສ່ຽງ ຕໍ່ຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ບໍ່ໃຫ້ນໍາອອກຈໍາໜ່າຍ ຢູ່ຕະຫຼາດນະຄອນຫຼວງວຽງຈັນ;

6. ພັດທະນາເຄື່ອງມື ແລະ ອຸປະກອນທີ່ທັນສະໄໝ ເພື່ອບໍລິການໃຫ້ບຸກຄົນ ແລະ ນິຕິບຸກຄົນ, ການຈັດຕັ້ງ ແລະ ຊາວກະສິກອນ ທີ່ຕ້ອງການກວດກາຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ.

**ມາດຕາ 16 ພັນທະຂອງຜູ້ປະກອບການດ້ານສິນຄ້າກ່ຽວກັບສັດ ແລະ ສັດນໍ້າ**

1. ຜູ້ປະກອບການດ້ານການຜະລິດ, ຈໍາໜ່າຍຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນໍ້າ ຕ້ອງຮັບປະກັນຄວາມປອດໄພ, ຄວາມສະອາດ ໃຫ້ຖືກຕ້ອງຕາມຫຼັກສຸຂານາໄມ ແລະ ຫຼັກໂພຊະນາການ; ພ້ອມທັງຕິດສະຫຼາກຂໍ້ມູນ ເປັນພາສາລາວ.

2. ສັດ ແລະ ຜະລິດຕະພັນສັດ ທີ່ນໍາມາຈໍາໜ່າຍໃນຕະຫຼາດ ຕ້ອງມີຂໍ້ມູນແຫຼ່ງທີ່ມາ, ມີການບັນທຶກຂໍ້ມູນຂອງສິນຄ້າ ແລະ ສາມາດກວດສອບຄືນໄດ້ ກ່ຽວກັບແຫຼ່ງທີ່ມາຂອງຜູ້ຜະລິດ ແລະ ສິນຄ້າໄດ້ ໃນກໍລະນີເກີດມີການບໍລິໂພກແລ້ວ ເກີດອາການເຈັບປ່ວຍ ຫຼື ເສຍຊີວິດ;

3. ຜູ້ປະກອບການຕ້ອງມີພັນທະຕໍ່ສັງຄົມ ແລະ ຜູ້ບໍລິໂພກ ຕ້ອງນໍາເອົາສິນຄ້າຂອງຕົນໄປວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ກ່ອນນໍາໄປຈໍາໜ່າຍຢູ່ຕະຫຼາດ;

4. ໃນກໍລະນີຜູ້ບໍລິໂພກ ຫາກເກີດອາການເຈັບປ່ວຍ, ເປັນພິດ, ຫຼື ເສຍຊີວິດ ຫຼັງຈາກການບໍລິໂພກຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ, ຜູ້ຜະລິດ ແລະ ຜູ້ຈໍາໜ່າຍ ຕ້ອງມີຄວາມຮັບຜິດຊອບໂດຍກົງຕໍ່ຜົນເສຍຫາຍ ຕາມກົດໝາຍຂອງ ສປປ ລາວ ວາງອອກ;

5. ອໍານວຍຄວາມສະດວກ ໃຫ້ໜ່ວຍງານຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ ເຂົ້າເກັບກໍາຂໍ້ມູນກວດກາ ສຸ່ມຕົວຢ່າງຢູ່ສະຖານທີ່ຜະລິດ, ປຸງແຕ່ງ ແລະ ຈໍາໜ່າຍ.

## ໝວດທີ 3
## ການຄຸ້ມຄອງ, ກວດກາມາດຕະຖານ ແລະ ລາຍຮັບ-ລາຍຈ່າຍ

**ມາດຕາ 17 ຮູບການກວດກາສັດ, ຜະລິດຕະພັນສັດ ແລະ ສັດນໍ້າ**

ການກວດກາສັດ, ຜະລິດຕະພັນສັດ ແລະ ສັດນໍ້າ ມີ 3 ຮູບການ ດັ່ງນີ້:

1. ກວດກາຕາມປົກກະຕິ: ແມ່ນການກວດກາ ທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີການກໍານົດເວລາອັນແນ່ນອນ ເຊິ່ງປະຕິບັດຢ່າງໜ້ອຍ 2-3 ຄັ້ງ ຕໍ່ປີ;

2. ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ທີ່ຖືກກວດກາຊາບລ່ວງໜ້າ;

3. ກວດກາແບບກະທັນຫັນ: ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຖືກຜູ້ກວດກາຊາບລ່ວງໜ້າ.

**ມາດຕາ 18 ເປົ້າໝາຍ ແລະ ປະເພດການກວດກາ**

1. ກວດກາມາດຕະຖານຟາມ;
2. ກວດກາມາດຕະຖານ ຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ;
3. ກວດກາຜູ້ປະກອບການ ທີ່ນໍາໃຊ້ຢາຕ້ານເຊື້ອຕົກຄ້າງ ແລະ ລັກລອບນໍາໃຊ້ສານເຄມີປົນເປື້ອນ;
4. ກວດກາການນໍາເຂົ້າ ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນໍ້າ;
5. ກວດກາຜູ້ບໍລິການ ແລະ ຄໍາຮ້ອງຟ້ອງຂອງຜູ້ບໍລິໂພກ;

**ມາດຕາ 19 ປະເພດ ແລະ ຮູບການກວດກາຄຸນນະພາບ**

1. ສຸ່ມກວດ;
2. ກວດປົກກະຕິ;
3. ກວດກາໂດຍການກຳນົດເປົ້າໝາຍ.

**ມາດຕາ 20 ອົງການກວດການມາດຕະຖານການຜະລິດ ຂອງຜະລິດຕະພັນ**

- ອົງການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບການລ້ຽງສັດ, ການບໍລິໂພກຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ປະກອບມີພາກສ່ວນ ດັ່ງນີ້:

1. ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;
2. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ;
3. ສັດຕະວະແພດບ້ານ;
4. ຄະນະກຳມະການຄຸ້ມຄອງຂັ້ນບ້ານ;

- ອົງການທີ່ພົວພັນກັບການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບການລ້ຽງ, ການບໍລິໂພກຜະລິດຕະພັນສັດ ແລະ ສັດນ້ຳ ປະກອບມີພາກສ່ວນ ດັ່ງນີ້:

1. ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ;
2. ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ;
3. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ;
4. ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງວຽງຈັນ;

ສິດ ແລະ ໜ້າທີ່ຂອງພະແນກການ ແລະ ອົງການທີ່ມີສ່ວນຮ່ວມພົວພັນ ໃນການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ແມ່ນປະຕິບັດຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງຂະແໜງການຕົນທີ່ໄດ້ກຳນົດໄວ້.

- ອົງການກວດກາໃນການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບການລ້ຽງ ແລະ ການບໍລິໂພກຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ປະກອບດ້ວຍ:

1. ເຈົ້າໜ້າທີ່ສັດຕະວະແພດ ນະຄອນຫຼວງວຽງຈັນ;
2. ເຈົ້າໜ້າທີ່ປະມົງ ນະຄອນຫຼວງວຽງຈັນ; ຜູ້ປະກອບການຕະຫຼາດ ແລະ ຮ້ານຈຳໜ່າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ມາດຕະຖານຜະລິດຕະພັນສັດ**

**ກ. ສິດໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້:**

1. ເປັນຜູ້ຕາງໜ້າອົງການປົກຄອງ ໃນການອຳນວຍຄວບຄຸມໂດຍກົງ ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃນທົ່ວນະຄອນຫຼວງວຽງຈັນ;
2. ປະຕິບັດສິດ ແລະ ໜ້າທີ່ ໃນພາກທີ IX ໝວດທີ 1 ມາດຕາ 100 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ແລະ ພາກທີ II ໝວດທີ 1 ມາດຕາ 45 ຂອງກົດໝາຍວ່າດ້ວຍການປະມົງ;
3. ອອກໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ແລະ ຢັ້ງຢືນຜົນວິໄຈສານເຄມີຕົກຄ້າງ ແລະ ສານພິດປົນເປື້ອນ; ຂຶ້ນທະບຽນຟາມລ້ຽງສັດຂອງບຸກຄົນ ແລະ ນິຕິບຸກຄົນ ໃນນະຄອນຫຼວງວຽງຈັນ;

4. ດຳເນີນການກວດກາວິໄຈຫາຢາເຄມີຕົກຄ້າງ ແລະ ສານພິດປົນເປື້ອນ ຢູ່ຟາມລ້ຽງສັດ, ຫຸ້ມຫໍ່, ຕະຫຼາດ, ຮ້ານຄ້າຕ່າງໆ ທີ່ຈຳໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳ;

5. ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການ ຂັ້ນນະຄອນຫຼວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໃນການກວດກາ ຄຸ້ມຄອງຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ໃຫ້ມີປະສິດທິພາບ ແລະ ໄດ້ຕາມມາດຕະຖານ;

6. ປະສານສົມທົບກັບທຸກພາກສ່ວນລັດ ແລະ ເອກະຊົນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ຢູ່ຕະຫຼາດນະຄອນຫຼວງວຽງຈັນ;

7. ລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາມາດຕະຖານສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ໃຫ້ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮັບຊາບ ຢ່າງເປັນປົກກະຕິ.

**ຂ. ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ:**

1. ເປັນຜູ້ອຳນວຍຄວບຄຸມໂດຍກົງ ໃນການຈັດຕັ້ງປະຕິບັດນິຕິກຳ ການຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ;

2. ຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ໃນພາກທີ IX ໝວດທີ 2 ມາດຕາ 107 ແລະ 108 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ແລະ ພາກທີ II ໝວດທີ 2 ມາດຕາ 59 ວ່າດ້ວຍເຈົ້າໜ້າທີ່ປະມົງຂອງກົດໝາຍວ່າດ້ວຍການປະມົງ;

3. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ຢູ່ຟາມ, ສະຖານທີ່ຫຸ້ມຫໍ່ ແລະ ສະຖານທີ່ຈຳໜ່າຍ;

4. ຕິດຕາມ, ກວດກາປະຈຳຢູ່ຕະຫຼາດ;

5. ສຸ່ມກວດກາວິໄຈຢາເຄມີຕົກຄ້າງ ແລະ ສານພິດປົນເປື້ອນໃນສັດ, ຜະລິດຕະພັນສັດ ແລະ ສັດນ້ຳ;

6. ລົງກວດກາ, ຕິດຕາມສະຖານທີ່ດຳເນີນການລ້ຽງ, ການເກັບຮັກສາ, ການແປຮູບ ແລະ ການຫຸ້ມຫໍ່;

7. ລາຍງານການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງເມືອງ ຮັບຊາບຢ່າງເປັນປົກກະຕິ.

**ຄ. ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ສັດຕະວະແພດ ແລະ ເຈົ້າໜ້າທີ່ປະມົງ:**

1. ປະຕິບັດ ສິດ ແລະ ໜ້າທີ່ ໃນພາກທີ IX ໝວດທີ 2 ມາດຕາ 107 ແລະ 108 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ແລະ ພາກທີ II ໝວດທີ 2 ມາດຕາ 59 ວ່າດ້ວຍເຈົ້າໜ້າທີ່ປະມົງຂອງກົດໝາຍວ່າດ້ວຍການປະມົງ;

2. ເປັນເຈົ້າການ, ອຳນວຍຄວາມສະດວກ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກັບມາດຕະຖານ;

3. ເຂົ້າຮ່ວມການກວດກາຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ນຳໜ່ວຍງານຄຸ້ມຄອງການລ້ຽງສັດ ແລະ ການປະມົງຂັ້ນເມືອງ;

4. ຮັບການສະເໜີ, ການຮ້ອງຟ້ອງຂໍ້ຄວາມເປັນທຳ ຈາກທຸກພາກສ່ວນ ທີ່ກ່ຽວພັນກັບຄຸນນະພາບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ;

5. ເຂົ້າຮ່ວມການແກ້ໄຂທຸກບັນຫາ ທີ່ເກີດຂຶ້ນກ່ຽວກັບຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ຕາມຄວາມຮັບຜິດຊອບຂອງຕົນ;

**ງ. ສິດ ແລະ ໜ້າທີ່ຜູ້ປະກອບການຕະຫຼາດ ແລະ ຮ້ານຈຳໜ່າຍຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ:**

ອຳນວຍຄວາມສະດວກໃຫ້ພາກລັດທີ່ກ່ຽວຂ້ອງ ລົງເຮັດວຽກກວດກາ ແລະ ເກັບຕົວຢ່າງເພື່ອວິໄຈຢາຕ້ານເຊື້ອ ແລະ ສານເຄມີປົນເປື້ອນ.

1. ດຳເນີນການຈັດສັນ ແລະ ກວດກາຕະຫຼາດ ໃຫ້ສອດຄ່ອງກັບນະໂຍບາຍກະສິກຳສະອາດ;

2. ກວດກາສິນຄ້າເຂົ້າຕະຫຼາດ ໃຫ້ໄປຕາມມາດຕະຖານ.

**ມາດຕາ 23 ລາຍຮັບ ແລະ ລາຍຈ່າຍໃຫ້ເຂົ້າໃນການຄຸ້ມຄອງ, ການກວດການມາດຕະຖານ ແລະ ຄຸນນະພາບ**

ກ.ລາຍຈ່າຍ:

- ຈ່າຍຄ່າເຄມີວິໄຈຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ;
- ຈ່າຍຄ່າຝຶກອົບຮົມຜູ້ປະກອບການ;
- ສ້າງປຶ້ມຄູ່ມືການກວດກາ;
- ຈ່າຍອື່ນໆ ຕາມລະບຽບການເງິນ;

ຂ. ລາຍຮັບ:

- ລາຍຮັບວິຊາການ ຂອງພະແນກກະສິກຳ ແລະ ປ່າໄມ້;
- ລາຍຮັບສະມາຊິກ ຈາກອົງການມາດຕະຖານ;
- ຄ່າບໍລິການ ຂອງຜູ້ປະກອບການດຳເນີນທຸລະກິດ ດ້ານການຜະລິດຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ;
- ຈາກງົບປະມານຂອງລັດໃນແຕ່ລະປີ.

## ໝວດທີ 4
## ຂໍ້ຫ້າມສຳລັບຜູ້ຜະລິດ, ປຸງແຕ່ງ, ຈຳໜ່າຍ ແລະ ບໍລິໂພກ

**ມາດຕາ 24 ຂໍ້ຫ້າມສຳລັບຜູ້ຜະລິດ ແລະ ປຸງແຕ່ງຜະລິດຕະພັນສິນຄ້າກ່ຽວກັບສັດ ແລະ ສັດນ້ຳ**

1. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ບໍ່ໃຫ້ນຳໃຊ້ສານເຄມີຕ້ອງຫ້າມ ເຂົ້າໃນການລ້ຽງ, ການຮັກສາ ແລະ ການຫຸ້ມຫໍ່ ແລະ ນຳໃຊ້ຢາເຄມີເກີນອັດຕາກຳນົດ ເຂົ້າໃນການລ້ຽງສັດ ແລະ ແປຮູບຜະລິດຕະພັນສັດ ແລະ ສັດນ້ຳ;

2. ຜູ້ລ້ຽງສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ບໍ່ໃຫ້ນຳໃຊ້ເຊື້ອຈຸລິນຊີ ທີ່ເປັນອັນຕະລາຍ ແລະ ກໍ່ໃຫ້ເກີດຜົນກະທົບຕໍ່ສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມ;

3. ບໍ່ໃຫ້ນຳໃຊ້ສານເຄມີ ເຂົ້າໃນການເກັບຮັກສາ ແລະ ຫຸ້ມຫໍ່ຜະລິດຕະພັນສັດ ແລະ ສັດນ້ຳ;

**ມາດຕາ 25 ຂໍ້ຫ້າມສຳລັບຜູ້ປະກອບການຈຳໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳ**

1. ບໍ່ອະນຸຍາດໃຫ້ຈຳໜ່າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ທີ່ມີສານຢາຕ້ານເຊື້ອຕົກຄ້າງໃນລະດັບທີ່ບໍ່ປອດໄພຕໍ່ຜູ້ບໍລິໂພກ;

2. ບໍ່ອະນຸຍາດໃຫ້ຈຳໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ທີ່ເສຍຄຸນນະພາບ ຫຼື ໝົດອາຍຸການບໍລິໂພກ;

3. ບໍ່ໃຫ້ຈຳໜ່າຍຜະລິດຕະພັນສັດ ບັນຈຸ ຫຼື ຫຸ້ມຫໍ່ ດ້ວຍພາຊະນະທີ່ປົນເປື້ອນສານເຄມີ ຫຼື ບໍ່ສະອາດ;

4. ບໍ່ອະນຸຍາດໃຫ້ຈຳໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ທີ່ບໍ່ສາມາດຢັ້ງຢືນແຫຼ່ງຜະລິດໄດ້;

5. ບໍ່ໃຫ້ຈຳໜ່າຍສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ຈາກຕ່າງປະເທດທີ່ນຳເຂົ້າມາບໍ່ຖືກຕ້ອງຕາມລະບຽບການ;

6. ບໍ່ໃຫ້ຈຳໜ່າຍຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດດນ້ຳ ທີ່ປົນເປື້ອນເຄມີ ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;

7. ບໍ່ໃຫ້ນຳໃຊ້ສານເຄມີ ທີ່ຊ່ວຍຮັກສາຄວາມສົດຂອງສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ທີ່ບໍ່ຖືກຕ້ອງຕາມຫຼັກວິຊາການ;

**ມາດຕາ 26 ຂໍ້ຫ້າມສຳລັບຜູ້ບໍລິໂພກ**

1. ຜູ້ບໍລິໂພກ ບໍ່ໃຫ້ປົກປິດຄວາມລັບ ເມື່ອຮູ້ວ່າຜະລິດຕະພັນສິນ ຄ້າກ່ຽວກັບສັດ ແລະ ສັດນ້ຳ ນັ້ນມີຢາຕ້ານເຊື້ອຕົກຄ້າງ, ສານເຄມີປົນເປື້ອນ ຫຼື ບໍ່ສະອາດ;

2. ບໍ່ໃຫ້ຊື້ຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ເມື່ອຮູ້ວ່າບໍ່ສະອາດ ແລະ ອາດມີຜົນກະທົບຮ້າຍແຮງຕໍ່ສຸຂະພາບ;

3. ບໍ່ໃຫ້ໂຄສະນາບິດເບືອນ ໃສ່ຮ້າຍປ້າຍສີ ຕໍ່ຜູ້ລ້ຽງ, ຜູ້ຜະລິດ ແລະ ຈຳໜ່າຍ ໃນທາງທີ່ບໍ່ຖືກຕ້ອງ ໂດຍບໍ່ມີຂໍ້ມູນຄວາມຈິງ.

**ໝວດທີ 5**
**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຜະລິດຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ສະອາດ, ໄດ້ຕາມມາດຕະຖານ, ຖືກຫຼັກສຸຂານາໄມ ແລະ ຫຼັກໂພຊະນາການ ການກວດກາຄຸ້ມຄອງຄຸນນະພາບສັດ, ຜະລິດຕະພັນສັດ ແລະ ສັດນ້ຳ ໃນນະຄອນຫຼວງວຽງຈັນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມພາລະບົດບາດ ຂອງແຕ່ລະຂັ້ນຄຸ້ມຄອງ ຢ່າງມີປະສິດທິຜົນ ເພື່ອເຮັດໃຫ້ຜູ້ບໍລິໂພກມີຄວາມປອດໄພ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຈາກທາງການ ຕາມຄວາມເໝາະສົມ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມ ທີ່ລະບຸໄວ້ໃນຂໍ້ຕົກລົງສະບັບນີ້ ຫາກພົບເຫັນຜະລິດຕະພັນສິນຄ້າ ກ່ຽວກັບສັດ ແລະ ສັດນ້ຳ ທີ່ມີຢາຕ້ານເຊື້ອຕົກຄ້າງ ແລະ ສານເຄມີປົນເປື້ອນ ໃນລະດັບທີ່ບໍ່ປອດໄພ ໃຫ້ປະຕິບັດ ດັ່ງນີ້:

1. ຄັ້ງທີ 1: ໃຫ້ສຶກສາອົບຮົມ ແລະ ແນະນຳ ພ້ອມທັງຂຽນບົດບັນທຶກ, ທຳລາຍສິນຄ້າຖິ້ມ ແລະ ເຈົ້າຂອງສິນຄ້າ ຮັບຜິດຊອບຄ່າໃຊ້ຈ່າຍໃນການທຳລາຍ;

2. ຄັ້ງທີ 2: ໃຫ້ກ່າວເຕືອນຄວາມຜິດ ພ້ອມທັງຍຶດສິນຄ້າທັງໝົດ ແລ້ວທຳລາຍຖິ້ມ ສ່ວນຄ່າໃຊ້ຈ່າຍໃນການທຳລາຍ ແມ່ນເຈົ້າຂອງສິນຄ້າຮັບຜິດຊອບ ແລະ ປັບໃໝເປັນເງິນ 2 ເທົ່າ ຂອງມູນຄ່າຜະລິດຕະພັນທັງໝົດ;

3. ຄັ້ງທີ 3: ຈະໄດ້ຍຶດສິນຄ້າ ແລະ ທຳລາຍຖິ້ມ, ເຈົ້າຂອງສິນຄ້າເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍ ໃນການທຳລາຍຖິ້ມທັງໝົດ, ພ້ອມເສຍຄ່າປັບໃໝເປັນເງິນ 5 ເທົ່າຂອງມູນຄ່າຜົນຜະລິດທັງໝົດ, ຍົກເລີກສັນຍາ ບໍ່ໃຫ້ຂາຍ ແລະ ຢຸດເຊົາທຸລະກິດຢ່າງຂາດຕົວ;

4. ສຳລັບພະນັກງານລັດທີ່ປະຕິບັດໜ້າທີ່ບໍ່ຖືກຕ້ອງ ຫຼື ບໍ່ມີຄວາມເປັນທຳ ໃຫ້ປະຕິບັດຕາມຂັ້ນຕອນ ແລະ ລົງໂທດ ຕາມກົດໝາຍວ່າດ້ວຍພະນັກງານລັດຖະກອນ ກຳນົດໄວ້ຢ່າງເຂັ້ມງວດ.

**ໝວດທີ 6**
**ບົດບັນຍັດສຸດທ້າຍ**

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ປະສານສົມທົບ ບັນດາພະແນກການອ້ອມຂ້າງ, ອົງການທຽບເທົ່າ, ເມືອງ, ບ້ານ, ປະຊາຊົນບັນດາເຜົ່າ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ເອົາລົງໃນຈົດໝາຍເຫດທາງລັດຖະການ ຫຼື ເວບໄຊ ຂອງນະຄອນຫຼວງວຽງຈັນ 15 ວັນ ເປັນຕົ້ນໄປ.

**ເຈົ້າຄອງນະຄອນຫຼວງວຽງຈັນ**

ປອນບ່າສົ່ງ:

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງ ນວ | 03 ສະບັບ; |
| - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 01 ສະບັບ; |
| - ກະຊວງກະສິກຳແລະປ່າໄມ້ | 01 ສະບັບ; |
| - ສະພາປະຊາຊົນ ນວ | 01 ສະບັບ; |
| - ບັນດາພະແນກ-ອົງການທຽບເທົ່າ ປອນລະ | 01ສະບັບ; |
| - ບັນດາເມືອງ | 09 ສະບັບ; |
| - ເກັບມ້ຽນ | 03 ສະບັບ. |

ປອ.ສິນລະວົງ ຄຸດໄພທູນ

13

Like 0 Share

**0 Comments** Sort by Oldest

Add a comment...

Facebook Comments Plugin

Facebook Social Comments

## ປະຕິທິນ

| August 2019 | | | | | | |
|---|---|---|---|---|---|---|
| S | M | T | W | T | F | S |
| 28 | 29 | 30 | 31 | 1 | 2 | 3 |
| 4 | 5 | 6 | 7 | 8 | 9 | 10 |
| 11 | 12 | 13 | 14 | 15 | 16 | 17 |
| 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 |

## ຄົ້ນຫາ

Search ...
ຄົ້ນຫາຂໍ້ມູນ...

Vientiane New day...
4,772 likes
Like Page
Share

## ຜູ້ເຂົ້າຢ້ຽມຊົມ

| | |
|---|---|
| ຈຳນວນຜູ້ເຂົ້າຊົມມື້ນີ້ | 7 |
| ຈຳນວນຜູ້ເຂົ້າຊົມວານນີ້ | 12 |
| ຈຳນວນຜູ້ເຂົ້າຊົມອາທິດນີ້ | 192 |
| ຈຳນວນຜູ້ເຂົ້າຊົມເດືອນນີ້ | 68 |
| ຈຳນວນຜູ້ເຂົ້າຊົມທັງໝົດ | 49063 |

Currently are 10 guests and no members online

## ແຜນທີ່ນະຄອນຫຼວງວຽງຈັນ

ສຳນັກງານປົກຄອງ ນະຄອນຫລວງວຽງຈັນ

ບ້ານ ໂພນໄຊ ເມືອງ ໄຊເສດຖາ ນະຄອນຫຼວງວຽງຈັນ, ໂທລະສັບ 021 260 206, ແຟັກ 021 260 206, Email: vtecabinet@live.com, www.vientianecity.gov.la